# ຍົກເວັ້ນການປັບໃໝ ແລະ ໂຈະການຈຳກັດເຂົ້າປະເທດ ສຳລັບຄົນຕ່າງດ້າວທີ່ຜິດກົດໝາຍ ເຊິ່ງສຳເລັດການສັກຢາວັກຊີນແລ້ວ ທີ່ສະໝັກໃຈໃຫ້ເນລະເທດ

□ **ເປົ້າໝາຍ**

◦ ກໍລະນີຄົນຕ່າງປະເທດທີ່ໄດ້ຮັບວັກຊີນໃນຊ່ວງ **ວັນທີ 31 ເດືອນທັນວາ ປີ 2021** ທີ່ ເກົາຫຼີ* ແລະ ອອກຈາກປະເທດ.

*ນອກຈາກຄົນຕ່າງປະເທດທີ່ໄດ້ຖືກປາບປາມຫຼືຖືກເຄື່ອນຍ້າຍອອກຈາກສະຖານີຕຳຫຼວດ,ເຊິ່ງເປັນຜູ້ທີ່ກະທຳຜິດກົດໝາຍອາຍາຫຼືຜູ້ທີ່ລະເມີດກົດລະບຽບການກັກກັນ.

□ **ລາຍລະອຽດ**

◦ **ການສັກຢາປ້ອງກັນ**

- ຜູ້ທີ່ສຳເລັດການສັກຢາວັກຊີນ**ເຂັມດຽວ (ເຊັ່ນ: Janssen)** ຫຼືວັກຊີນ **2 ເຂັມ (ເຊັ່ນ: Pfizer, Moderna, AstraZeneca, ແລະອື່ນໆ)***

* ລວມທັງຄົນເຂົ້າເມືອງຜິດກົດໝາຍ ຜູ້ທີ່ສຳເລັດການສັກຢາວັກຊີນກ່ອນມື້ທີ່ ລະບຽບສະບັບນີ້ມີຜົນ ບັງຄັບໃຊ້ (**ວັນທີ 12 ເດືອນຕຸລາ ປີ2021**)

- ຈະມີນະໂຍບາຍແກ່ ຄົນຕ່າງປະເທດທີ່ສະໝັກໃຈໃຫ້ເນລະເທດ ເຖິງແມ່ນວ່າ ການສັກຢາວັກຊີນ ສຳເລັດ ຜ່ານໄປບໍ່ເຖິງ 14 ມື້ກໍຕາມ.

* **ເອກະສານທີ່ເປັນຫຼັກຖານ:** ໃບຢັ້ງຢືນການສັກຢາວັກຊີນ (ພິມໃບຢັ້ງຢືນCoov ທາງເອເລັກ ໂຕຣນິກ ຫຼື ພິມໃບຢັ້ງຢືນເປັນເຈ້ຍ ເພື່ອອ້າງອີງ)

◦ **ນະໂຍບາຍທີ່ໄດ້ຮັບ:** ໃນກໍລະນີທີ່ອອກເດີນທາງໂດຍສະໝັກໃຈ ຈະມີການຍົກເວັ້ນການ ປັບໃໝ ແລະ ໂຈະການຈຳກັດການເຂົ້າປະເທດ

◦ **ວັນທີຈັດຕັ້ງປະຕິບັດ: ວັນທີ12 ເດືອນຕຸລາ ປີ 2021.** (ວັນອັງຄານ) ~ ວັນທີ ກຳນົດໃໝ່ ຕ່າງຫາກ* (ການບັງຄັບໃຊ້ຊົ່ວຄາວ)

*ໃນອະນາຄົດ,ຕ້ອງອີງຕາມສະຖານະການລະບາດຂອງພະຍາດCOVID-19,ແລະອື່ນໆ,ວັນທີສິ້ນສຸດການມີຜົນບັງຂັບໃຊ້ຈະຖືກປະກາດອີກຕ່າງຫາກ.

□ **ແຈ້ງການ**

◦**ອີງຕາມ ລະບຽບທີ່ມີຢູ່ ກ່ອນກັບ 「ລະບົບການແຈ້ງລ່ວງໜ້າ ການເດີນທາງອອກປະເທດແບບສະໝັກໃຈ」.**

- ຫຼັງຈາກການລາຍງານລ່ວງຫນ້າຂອງຜູ້ເຂົ້າຢູ່ມຢູ່ໃນຫ້ອງການກວດຄົນເຂົ້າເມືອງ ຫຼືການລາຍງານ ລ່ວງຫນ້າທາງອອນໄລນ

- **ການຍົກເວັ້ນຄ່າປັບໃໝ ແລະ ໂຈະການຈຳກັດການເຂົ້າປະເທດ ໃນມື້ດຽວກັນ ໂດຍຜ່ານ ສະໜາມບິນ ເທົ່ານັ້ນ.**

※ **ສອບຖາມ ແລະ ການຊີ້ແຈງ:** ສູນຂໍ້ມູນຂ່າວສານສຳລັບຄົນຕ່າງປະເທດ (1345)

| ເວລາປະຕິບັດງານ | ພາສາທີ່ສາມາດໃຊ້ໄດ້ສຳລັບການປຶກສາຫາລື ແລະ ການອະທິບາຍ |
|---|---|
| 24 ຊົ່ວໂມງ | ພາສາອັງກິດ, ພາສາຈີນ |
| 09:00~18:00 | ພາສາ: ຍີ່ປຸ່ນ, ຫວຽດນາມ, ໄທ, ອິນໂດເນເຊຍ, ລັດເຊຍ, ມົງໂກລີ, ບັງກະລາເທດ, ປາກິດສະຖານ, ເນປານ, ກຳປູເຈຍ, ມຽນມາ, ຝຣັ່ງ, ເຢຍລະມັນ, ແອສປາໂຍນ, ຟີລິບປິນ, ອາຣັບ, ສີລັງກາ |

**<ການແປພາສານີ້ໄດ້ເຮັດຢູ່ທີ່ສູນກາງໂທລະສັບ ດານູຣີ 1577-1366>**